**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ

ເລກທີ 295 /ລບ

ນະຄອນຫຼວງວຽງຈັນ, ວັນທີ 29.08.2022

# ດຳລັດ
# ວ່າດ້ວຍກອງທຶນກິລາ-ກາຍຍະກຳ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ກິລາ-ກາຍຍະກຳ ສະບັບເລກທີ 74/ສພຊ, ລົງວັນທີ 25 ພະຈິກ 2019;
- ອີງຕາມ ໜັງສືສະເໜີ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 7718/ສສກ, ລົງວັນທີ 04 ສິງຫາ 2022.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ ແລະ ລະບຽບການ ກ່ຽວກັບການຄຸ້ມຄອງ, ນຳໃຊ້ ແລະ ຕິດຕາມ ກວດກາ ກອງທຶນກິລາ-ກາຍຍະກຳ ເພື່ອລະດົມ ແລະ ສະສົມທຶນໃຫ້ພຽງພໍ ແນໃສ່ສະໜອງໃຫ້ແກ່ການພັດທະນາວຽກງານ ກິລາ-ກາຍຍະກຳ ມີຄຸນນະພາບ, ກ້າວໜ້າ ແລະ ທັນສະໄໝ ປະກອບສ່ວນເຂົ້າໃນການພັດທະນາຊັບພະຍາກອນ ມະນຸດ ແລະ ເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ກອງທຶນກິລາ-ກາຍຍະກຳ**

ກອງທຶນກິລາ-ກາຍຍະກຳ ຂຽນຫຍໍ້ເປັນພາສາລາວວ່າ "ກທກ" ແລະ ຂຽນເປັນພາສາອັງກິດວ່າ "Sports Fund - SF" ແມ່ນ ກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນ ເພື່ອລະດົມ ແລະ ສະສົມທຶນຈາກແຫຼ່ງຕ່າງໆ ແນໃສ່ ຮັບປະກັນໃຫ້ມີທຶນພຽງພໍ ແລະ ຍືນຍົງ ເຂົ້າໃນວຽກງານພັດທະນາກິລາ-ກາຍຍະກຳ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ລາຍໄດ້ຈາກການຈັດການແຂ່ງຂັນ** ໝາຍເຖິງ ລາຍໄດ້ຈາກການຈັດການແຂ່ງຂັນກິລາປະເພດຕ່າງໆ ພາຍໃນປະເທດ ໃນລະດັບຊາດ ແລະ ລະດັບສາກົນ;

2. **ການຂາຍລິຂະສິດກ່ຽວກັບກິລາ-ກາຍຍະກຳ** ໝາຍເຖິງ ການໃຫ້ສິດແກ່ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ໃນການດຳເນີນວຽກງານກ່ຽວກັບກິລາ-ກາຍຍະກຳ ໂດຍມີການຕົກລົງ ກ່ຽວກັບຜົນປະໂຫຍດ ທີ່ຈະເກີດຂຶ້ນ ຈາກການອະນຸຍາດໃຫ້ສິດດັ່ງກ່າວ;



Scanned with CamScanner

3. **ນັກກິລາອາຊີບ** ໝາຍເຖິງ ຜູ້ທີ່ຫຼິ້ນກິລາ ທີ່ຍຶດຖືເປັນອາຊີບ;

4. **ນັກກິລາທີມຊາດ** ໝາຍເຖິງ ນັກກິລາ ທີ່ຖືກແຕ່ງຕັ້ງ ຈາກລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ໃນການເຂົ້າຮ່ວມເຄື່ອນໄຫວວຽກງານກິລາ-ກາຍຍະກຳ ຢູ່ພາຍໃນ ແລະ ຕ່າງປະເທດ.

**ມາດຕາ 4 ຫຼັກການຄຸ້ມຄອງກອງທຶນກິລາ-ກາຍຍະກຳ**

ການຄຸ້ມຄອງ ກທກ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ລວມສູນ, ເປັນເອກະພາບ ຕາມງົບປະມານແຫ່ງລັດ;

2. ຮັບປະກັນການນຳໃຊ້ກອງທຶນ ໃຫ້ຖືກຕ້ອງຕາມເປົ້າໝາຍ, ປະຢັດ, ມີປະສິດທິຜົນ ແລະ ມີຄວາມຍືນຍົງ;

3. ຮັບປະກັນການປະຕິບັດລາຍຈ່າຍ ຕາມແຜນງົບປະມານປະຈຳປີ ໃຫ້ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ, ໂປ່ງໃສ ແລະ ສາມາດກວດສອບໄດ້;

4. ທຸກລາຍຮັບ, ລາຍຈ່າຍ ຕ້ອງຜ່ານລະບົບການບັນທຶກບັນຊີ ພ້ອມທັງມີການຕິດຕາມ, ກວດກາ ຢ່າງເປັນປົກກະຕິ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 2
## ແຫຼ່ງລາຍຮັບ ແລະ ການນຳໃຊ້ກອງທຶນ

**ມາດຕາ 5 ແຫຼ່ງລາຍຮັບກອງທຶນກິລາ-ກາຍຍະກຳ**

ແຫຼ່ງລາຍຮັບຂອງ ກທກ ມີດັ່ງນີ້:

1. ການປະກອບສ່ວນຂອງລັດ;

2. ລາງວັນເປັນເງິນ ຂອງນັກກິລາທີມຊາດ ບຸກຄົນ ຫຼື ໝູ່ຄະນະ ຫົກສ່ວນຮ້ອຍ ຂອງລາຍຮັບຕົວຈິງ;

3. ລາຍຮັບຈາກການອະນຸຍາດຈັດແຂ່ງຂັນກິລາ ຕາມການຕົກລົງກັບຜູ້ຮັບຜິດຊອບຈັດການແຂ່ງຂັນ;

4. ການຂາຍລິຂະສິດກ່ຽວກັບກິລາ-ກາຍຍະກຳ ສິບສ່ວນຮ້ອຍ ຂອງມູນຄ່າການຂາຍລິຂະສິດ ໃນເບື້ອງຕົ້ນ;

5. ການຊ່ວຍເຫຼືອ ຫຼື ອຸປະຖຳ ເປັນເງິນ ແລະ ວັດຖຸ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ;

6. ລາຍຮັບຈາກການບໍລິຫານກອງທຶນ ແລະ ດອກເບ້ຍເງິນຝາກກອງທຶນກິລາ-ກາຍຍະກຳ ຢູ່ທະນາຄານທຸລະກິດ;

7. ລາຍຮັບອື່ນ ທີ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 6 ການນຳໃຊ້ກອງທຶນກິລາ-ກາຍຍະກຳ**

ກອງທຶນກິລາ-ກາຍຍະກຳ ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການພັດທະນາບຸກຄະລາກອນກິລາ-ກາຍຍະກຳ, ນັກກິລາ ທີມຊາດ ແລະ ອາຊີບ;
2. ການຄົ້ນຄວ້າວິທະຍາສາດ ແລະ ເຕັກໂນໂລຊີ ດ້ານການກິລາ;
3. ການພັດທະນາ ສະຫະພັນກິລາແຫ່ງຊາດ;
4. ປະກອບສ່ວນໃຫ້ທຶນການສຶກສາ ກ່ຽວກັບວຽກງານກິລາ-ກາຍຍະກຳ;
5. ປະຕິບັດນະໂຍບາຍ, ສະຫວັດດີການໃຫ້ແກ່ ບຸກຄະລາກອນກິລາ-ກາຍຍະກຳ ແລະ ນັກກິລາທີມຊາດ;
6. ການຈັດກິດຈະກຳແຂ່ງຂັນກິລາ-ກາຍຍະກຳ;
7. ການບໍລິຫານກອງທຶນ.

**ມາດຕາ 7 ການຄຸ້ມຄອງເບີກຈ່າຍເງິນກອງທຶນກິລາ-ກາຍຍະກຳ**

ການຄຸ້ມຄອງການເບີກຈ່າຍເງິນ ກທກ ຕ້ອງປະຕິບັດ ດັ່ງນີ້:

1. ທຸກໂຄງການກ່ຽວກັບວຽກງານພັດທະນາກິລາ-ກາຍຍະກຳ ຕ້ອງມອບໃນແຜນການປະຈຳປີ ແລະ ຜ່ານການຮັບຮອງຈາກສະພາບໍລິຫານ ກທກ;



Scanned with CamScanner

2. ທຸກໂຄງການ ທີ່ຖືກຮັບຮອງແລ້ວ ຕ້ອງໄດ້ຮັບການອະນຸມັດຈາກປະທານສະພາບໍລິຫານ;

3. ການເບີກຈ່າຍເງິນກອງທຶນ ຕ້ອງປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

4. ທຸກເປົ້າໝາຍ ໃນການເບີກຈ່າຍເງິນກອງທຶນ ບໍ່ໃຫ້ຊໍ້າຊ້ອນກັບແຫຼ່ງທຶນອື່ນ;

5. ການຈັດຕັ້ງປະຕິບັດເງິນກອງທຶນ ຕ້ອງບົນພື້ນຖານຄວາມຮັບຜິດຊອບ ແລະ ມີປະສິດທິຜົນ.

**ມາດຕາ 8 ການຖອນເງິນກອງທຶນ**

ການຖອນເງິນຈາກບັນຊີ ກທກ ຕ້ອງມີສອງລາຍເຊັນ ຂອງຜູ້ທີ່ໄດ້ຮັບມອບສິດ ຈາກສະພາບໍລິຫານ ກທກ.

ການຖອນເງິນຈາກບັນຊີເງິນຝາກ ບໍ່ໃຫ້ເກີນລາຍຮັບທັງໝົດຂອງກອງທຶນ ໃນແຕ່ລະປີ. ການຖອນເງິນຂອງກອງທຶນ ບໍ່ສາມາດຖອນໄດ້ທັງໝົດ ແລະ ຕ້ອງມີເງິນແຮໄວ້ ຊາວສ່ວນຮ້ອຍ ຂອງກອງທຶນ.

## ໝວດທີ 3
## ການຄຸ້ມຄອງບໍລິຫານກອງທຶນກິລາ-ກາຍຍະກໍາ

**ມາດຕາ 9 ໂຄງປະກອບການຈັດຕັ້ງ ກອງທຶນກິລາ-ກາຍຍະກໍາ**

ໂຄງປະກອບການຈັດຕັ້ງຄຸ້ມຄອງບໍລິຫານ ກທກ ມີດັ່ງນີ້:

1. ສະພາບໍລິຫານ;
2. ກອງເລຂາ.

**ມາດຕາ 10 ສະພາບໍລິຫານກອງທຶນກິລາ-ກາຍຍະກໍາ**

ສະພາບໍລິຫານກອງທຶນ ແມ່ນ ການຈັດຕັ້ງໜຶ່ງ ທີ່ໄດ້ຮັບການແຕ່ງຕັ້ງໂດຍນາຍົກລັດຖະມົນຕີ, ມີຄວາມຮັບຜິດຊອບຕໍ່ລັດຖະບານ ໃນການຊີ້ນໍາການເຄື່ອນໄຫວຂອງ ກທກ. ສະພາບໍລິຫານ ກທກ ມີວາລະບໍລິຫານກອງທຶນ ຫ້າ ປີ.

**ມາດຕາ 11 ໂຄງປະກອບບຸກຄະລາກອນສະພາບໍລິຫານ**

ໂຄງປະກອບບຸກຄະລາກອນ ສະພາບໍລິຫານກອງທຶນ ປະກອບມີ ດັ່ງນີ້:

| | |
|---|---|
| 1. ທ່ານ ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ | ເປັນປະທານ; |
| 2. ທ່ານ ຮອງລັດຖະມົນຕີ ກະຊວງການເງິນ | ເປັນຮອງປະທານ; |
| 3. ທ່ານ ຮອງລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ | ເປັນຮອງປະທານ ທັງເປັນຜູ້ປະຈໍາການ; |
| 4. ທ່ານ ຜູ້ຕາງໜ້າ ກະຊວງແຜນການ ແລະ ການລົງທຶນ | ເປັນຄະນະ; |
| 5. ທ່ານ ຜູ້ຕາງໜ້າ ສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ | ເປັນຄະນະ; |
| 6. ທ່ານ ຜູ້ຕາງໜ້າ ສະພາການຄ້າ ແລະ ອຸດສະຫະກໍາແຫ່ງຊາດ | ເປັນຄະນະ; |
| 7. ທ່ານ ຫົວໜ້າກົມການເງິນ ກະຊວງສຶກສາທິການ ແລະ ກິລາ | ເປັນຄະນະ; |
| 8. ທ່ານ ຫົວໜ້າກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ | ເປັນຄະນະ; |
| 9. ທ່ານ ເລຂາທິການ ຄະນະກໍາມະການໂອແລມປິກແຫ່ງຊາດ | ເປັນຄະນະ; |
| 10. ທ່ານ ຜູ້ຕາງໜ້າສະຫະພັນກິລາແຫ່ງຊາດ | ເປັນຄະນະ; |
| 11. ທ່ານ ຫົວໜ້າກົມກິລາລະດັບສູງ | ເປັນຄະນະ ທັງເປັນຫົວໜ້າກອງເລຂາ. |

ໂຄງປະກອບບຸກຄະລາກອນຂອງສະພາບໍລິຫານ ກທກ ສາມາດປັບປຸງ ແລະ ປ່ຽນແປງ ຕາມຄວາມຈໍາເປັນ ໂດຍການຕົກລົງຂອງນາຍົກລັດຖະມົນຕີ.

ສະມາຊິກຂອງສະພາບໍລິຫານ ກທກ ຈະບໍ່ໄດ້ຮັບເງິນເດືອນ ແລະ ຄ່າແຮງງານ ໃນການປະຕິບັດໜ້າທີ່ຂອງຕົນ ນອກຈາກເບ້ຍລ້ຽງປະຊຸມ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການຄຸ້ມຄອງ ກທກ.



Scanned with CamScanner

**ມາດຕາ 12 ສິດ ແລະ ໜ້າທີ່ ຂອງສະພາບໍລິຫານ ກທກ**

ສະພາບໍລິຫານ ກທກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບ ກທກ;
2. ພິຈາລະນາ ແລະ ຮັບຮອງແຜນການເຄື່ອນໄຫວ, ບົດລາຍງານ, ແຜນລາຍຮັບ-ລາຍຈ່າຍ ຂອງ ກທກ ປະຈໍາປີ;
3. ແຕ່ງຕັ້ງກອງເລຂາ ກທກ;
4. ລະດົມຂົນຂວາຍທຶນ ຈາກ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ;
5. ພິຈາລະນາຮັບຮອງໂຄງການທີ່ຂໍນໍາໃຊ້ ກທກ;
6. ພິຈາລະນາຮັບຮອງລະບຽບການຂອງ ກທກ;
7. ຕິດຕາມ, ກວດກາ ແລະ ປະເມີນຜົນການນໍາໃຊ້ເງິນຂອງ ກທກ;
8. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຂອງ ກທກ ຕໍ່ລັດຖະບານ ຢ່າງໜ້ອຍປີລະຄັ້ງ;
9. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນລະບຽບຂອງ ກທກ.

**ມາດຕາ 13 ກອງປະຊຸມສະພາບໍລິຫານ ກອງທຶນກິລາ-ກາຍຍະກໍາ**

ກອງປະຊຸມສະໄໝສາມັນ ຂອງສະພາບໍລິຫານ ກທກ ຈັດຂຶ້ນສອງຄັ້ງຕໍ່ປີ, ໃນກໍລະນີ ຈໍາເປັນ ແລະ ຮີບດ່ວນ ສາມາດຈັດກອງປະຊຸມວິສາມັນຂຶ້ນໄດ້ ຊຶ່ງມີສະມາຊິກສະພາບໍລິຫານ ກທກ ເຂົ້າຮ່ວມຢ່າງໜ້ອຍ ສອງສ່ວນສາມ ຂຶ້ນໄປ ຈຶ່ງສາມາດເປີດໄດ້. ມະຕິຂອງກອງປະຊຸມສະພາບໍລິຫານ ຈະມີຜົນໃຊ້ໄດ້ກໍຕໍ່ເມື່ອມີຄະແນນສຽງສ່ວນຫຼາຍຮັບຮອງເອົາ.

ໃນກໍລະນີ ປະທານບໍ່ຢູ່ ຫຼື ຕິດຂັດ ແມ່ນໃຫ້ຮອງປະທານ ຜູ້ທີ່ຖືກມອບໝາຍ ເປັນຜູ້ປະຕິບັດໜ້າທີ່ແທນ.

**ມາດຕາ 14 ກອງເລຂາກອງທຶນກິລາ-ກາຍຍະກໍາ**

ກອງເລຂາ ກທກ ໂດຍກໍານົດເອົາ ກົມກິລາລະດັບສູງ, ກະຊວງສຶກສາທິການ ແລະ ກິລາ ເປັນຫ້ອງການກອງເລຂາ ກທກ ຊຶ່ງປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ແລະ ວິຊາການຊ່ວຍວຽກຈໍານວນໜຶ່ງ ທີ່ຖືກແຕ່ງຕັ້ງ ຫຼື ປົດຕໍາແໜ່ງໂດຍສະພາບໍລິຫານກອງທຶນ.

ສໍາລັບ ສິດ ແລະ ໜ້າທີ່ ຂອງກອງເລຂາກອງທຶນກິລາ-ກາຍຍະກໍາ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 4
## ການເປີດບັນຊີ, ການກວດສອບ ແລະ ການກວດກາ

**ມາດຕາ 15 ການເປີດບັນຊີເງິນຝາກຂອງກອງທຶນ**

ກອງທຶນກິລາ-ກາຍຍະກໍາ ຕ້ອງເປີດບັນຊີເງິນຝາກ ໃນລະບົບຄັງເງິນແຫ່ງຊາດ ຫຼື ທະນາຄານທຸລະກິດ, ທຸກແຫຼ່ງລາຍຮັບ ຂອງ ກທກ ຕ້ອງໂອນເຂົ້າໃນບັນຊີເງິນຝາກດັ່ງກ່າວ ໂດຍຜ່ານການເຫັນດີຈາກກະຊວງການເງິນ.

**ມາດຕາ 16 ການກວດສອບບັນຊີ**

ການກວດສອບບັນຊີ ຕ້ອງດໍາເນີນທຸກໆປີ ໂດຍການກວດສອບພາຍໃນ ແລະ ອົງການກວດສອບແຫ່ງລັດ.

ຜົນຂອງການກວດສອບ ຕ້ອງໄດ້ແຈ້ງໃຫ້ສາທາລະນະຊົນຮັບຊາບ ເພື່ອຄວາມໂປ່ງໃສໃນການນໍາໃຊ້ເງິນ ກທກ. ຖ້າມີກໍລະນີ ນໍາໃຊ້ເງິນ ກທກ ບໍ່ຖືກຕ້ອງຕາມເປົ້າໝາຍທີ່ໄດ້ກໍານົດໄວ້ ຈະຖືກປະຕິບັດວິໄນຕາມແຕ່ລະກໍລະນີ ທີ່ກົດໝາຍ ແລະ ລະບຽບການກໍານົດໄວ້.



Scanned with CamScanner

**ມາດຕາ 17 ການກວດກາ ກອງທຶນກິລາ-ກາຍຍະກໍາ**

ການກວດກາ ກທກ ແມ່ນການກວດກາການເຄື່ອນໄຫວ ແລະ ການຄຸ້ມຄອງບໍລິຫານຂອງ ກທກ ຊຶ່ງປະກອບດ້ວຍສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ແມ່ນການກວດກາ ທີ່ດໍາເນີນໄປຕາມແຜນການຢ່າງເປັນປະຈໍາ ແລະ ມີກໍານົດເວລາທີ່ແນ່ນອນ;

2. ການກວດກາໂດຍແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນ ເມື່ອເຫັນວ່າມີຄວາມຈໍາເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ແມ່ນການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ກວດກາຊາບລ່ວງໜ້າ.

**ມາດຕາ 18 ການລາຍງານ**

ກອງເລຂາ ກທກ ຕ້ອງເຮັດບົດລາຍງານ ປະຈໍາໄຕມາດ, ຫົກເດືອນ ແລະ ປະຈໍາປີ ກ່ຽວກັບ ການຄຸ້ມຄອງ ແລະ ນໍາໃຊ້ກອງທຶນ ລວມທັງແຫຼ່ງລາຍຮັບ-ລາຍຈ່າຍປະຈໍາປີ. ບົດລາຍງານທຸກສະບັບ ຕ້ອງໄດ້ຮັບຮອງຈາກສະພາບໍລິຫານ ກທກ ກ່ອນນໍາສົ່ງ ລັດຖະບານ ແລະ ພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 19 ຕາປະທັບ**

ກອງທຶນກິລາ-ກາຍຍະກໍາ ມີຕາປະທັບເປັນຂອງຕົນເອງ ເພື່ອນໍາໃຊ້ເຂົ້າໃນການເຄື່ອນໄຫວວຽກງານທາງລັດຖະການ.

**ມາດຕາ 20 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງສຶກສາທິການ ແລະ ກິລາ ເປັນເຈົ້າການໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດໍາລັດສະບັບນີ້ ໃຫ້ມີປະສິດທິຜົນ.

ບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ປະຕິບັດດໍາລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 21 ຜົນສັກສິດ**

ດໍາລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 1 ກັນຍາ 2022 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ພັນຄໍາ ວິພາວັນ**



Scanned with CamScanner